# Curriculum on Basic Skills in legal profession
# for enforcement and court judgement (Laos)

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 11
## Ethic of participants in the enforcement and court judgement
## ຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ

### 1. ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ

ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ໝາຍເຖິງ ຜູ້ເຂົ້າຮ່ວມເຄື່ອນໄຫວປະຕິບັດຄຳຕັດສິນຂອງສານ ຕາມການເຊີນຂອງອົງການປະຕິບັດຄຳຕັດສິນຂອງສານ ເຊັ່ນ: ຜູ້ຊ່ຽວຊານ ຫຼື ນິຕິບຸກຄົນ, ຄະນະກຳມະການ[1], ຂະແໜງການເງິນ ແລະ ອົງການປົກຄອງບ້ານ ຕາມການສະເໜີຂອງຄູ່ຄວາມ ແລະ ອົງການປະຕິບັດຄຳຕັດສິນຂອງສານ, ຍົກເວັ້ນຄູ່ຄວາມ ຫຼື ຜູ້ຕາງໜ້າ.

ໃນສະພາບການຕົວຈິງ, ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ຍັງມີບຸກຄົນ ຫຼື ການຈັດຕັ້ງທີ່ຕິດພັນກັບຊັບສິນຂອງຜູ້ຖືກປະຕິບັດຄຳ ຕັດສິນຂອງສານ, ແຕ່ບໍ່ມີສ່ວນກ່ຽວຂ້ອງໃນການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນວ່າ: ທະນາຄານທີ່ຜູ້ຖືກປະຕິບັດຄຳຕັດສິນຂອງສານມີບັນຊີເງິນຝາກຢູ່ທະນາຄານດັ່ງກ່າວ, ບຸກຄົນ ຫຼື ການຈັດຕັ້ງທີ່ກຳລັງນຳໃຊ້ວັດຖຸ ຫຼື ອາໄສຢູ່ເຮືອນຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ຊຶ່ງວ່າບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວນີ້ ໃນເວລາຈັດຕັ້ງປະຕິບັດຄຳ ຕັດສິນຂອງສານ, ຖ້າຫາກອົງການປະຕິບັດຄຳຕັດສິນຂອງສານເຊີນເຂົ້າຮ່ວມກໍຈະຖືວ່າເປັນຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ, ຈະບໍ່ຖືວ່າເປັນຜູ້ປະຕິບັດຄຳຕັດສິນຂອງສານ ຫຼື ຜູ້ຖືກປະຕິບັດຄຳຕັດສິນຂອງສານ, ໃນການເຊີນແມ່ນເພື່ອຂໍການຮ່ວມມືໃນການສະໜອງຂໍ້ມູນ ຫຼື ຫຼັກຖານ ຫຼື ໃຫ້ການຮ່ວມມືປະຕິບັດຄຳຕັດສິນຂອງສານ.

ສະນັ້ນ, ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານແມ່ນບຸກຄົນ ແລະ ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງທາງດ້ານສິດຜົນປະໂຫຍດໃນຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອມາຈັດຕັ້ງປະຕິບັດ, ແມ່ນບຸກຄົນ ແລະ ການຈັດຕັ້ງທີ່ໃຫ້ການຮ່ວມມືໃນການປະຕິບັດຄຳຕັດສິນຂອງສານເຊັ່ນ: ທະນາຄານ, ອົງການປົກຄອງທີ່ກ່ຽວຂ້ອງ, ອົງການບ່ອນເຮັດວຽກຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານ, ຊ່ຽວຊານ ທີ່ກ່ຽວຂ້ອງ.

ເພື່ອໃຫ້ສາມາດຈຳແນກໄດ້ເຖິງຄວາມແຕກຕ່າງຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານກັບບັນດາເຈົ້າກຳອື່ນໃນຂະບວນວິວັດການປະຕິບັດຄຳຕັດສິນຂອງສານ, ພວກເຮົາສາມາດສັງເກດຕົວຢ່າງລຸ່ມນີ້:

- ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ: ຜູ້ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.
- ຜູ້ປະຕິບັດຄຳຕັດສິນຂອງສານ: ຄູ່ຄວາມ, ຄູ່ກໍລະນີໃນຄຳຕັດສິນ;

---

[1] ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 447/ກຍ, ລົງວັນທີ 05 ເມສາ 2019 ວ່າດ້ວຍການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ໜ້າ 2.

- ຜູ້ຈັດຕັ້ງປະຕິບັດຄຳຕັດສິນຂອງສານ: ພະນັກງານປະຕິບັດຄຳຕັດສິນຂອງສານ, ເຈົ້າໜ້າທີ່ກ່ຽວຂ້ອງ.

## 2. ຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ

ລັດ ສປປ ລາວ ພວກເຮົາໄດ້ຫັນຈາກຄຸ້ມຄອງລັດ ດ້ວຍແນວທາງນະໂຍບາຍ ແລະ ມະຕິຄຳສັ່ງມາເປັນການຄຸ້ມຄອງລັດ, ເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ ຊຶ່ງຖືວ່າເປັນບາດລ້ຽວອັນສຳຄັນຄັ້ງຍິ່ງໃຫຍ່ ໝາຍຄວາມວ່າໄດ້ຫັນມາ ໃຊ້ເຄື່ອງມືໃນການຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະກົດໝາຍ ຊຶ່ງເປັນອາວຸດອັນແຫຼມຄົມຂອງພັກ ແລະ ລັດ, ໃນນັ້ນການເຄື່ອນໄຫວຂອງສັງຄົມກໍມີການປ່ຽນແປງຄື ພົນລະເມືອງລາວໄດ້ມີລັດຖະທຳມະນູນ ແລະ ກົດໝາຍເປັນບ່ອນອີງໃນການດຳລົງຊີວິດປະຈຳວັນ.

ໃນລັດໜຶ່ງໆ ທີ່ປົກຄອງດ້ວຍກົດໝາຍ, ຕາມພາສາກົດໝາຍ ເພິ່ນເອີ້ນວ່າ: ນິຕິລັດ “ລັດແຫ່ງກົດໝາຍ” ເນື້ອແທ້ຂອງລັດແຫ່ງກົດໝາຍນັ້ນ ໝາຍຄວາມວ່າເວລາໃດເພິ່ນກໍຖືວ່າກົດໝາຍເປັນສິ່ງສັກສິດ ຊຶ່ງປະຊາຊົນ, ພົນລະເມືອງທຸກຄົນຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ ເຖິງຢ່າງໃດກໍຕາມ, ການທີ່ສັງຄົມໄດ້ມີລັດຖະທຳມະນູນ ແລະ ກົດໝາຍເປັນບ່ອນອີງໃນການດຳລົງຊີວິດນັ້ນ ກໍບໍ່ໝາຍຄວາມວ່າກົດໝາຍນັ້ນໆ ຈະສາມາດເຮັດໃຫ້ເກີດຄວາມສັກສິດ ແລະ ສັງຄົມມີຄວາມສະຫງົບ, ຍຸຕິທຳດ້ວຍໂຕຂອງມັນເອງ, ແຕ່ກົນໄກສຳຄັນທີ່ຈະເຮັດໃຫ້ກົດໝາຍມີຄວາມສັກສິດ ແລະ ຖືກຕ້ອງ, ເປັນທຳນັ້ນ ແນ່ນອນທີ່ສຸດຕ້ອງຂຶ້ນຢູ່ກັບຄົນ ເວົ້າລວມ, ເວົ້າສະເພາະກໍແມ່ນຄົນຜູ້ທີ່ເຮັດວຽກງານຍຸຕິທຳນັ້ນເອງ ແລະ ສ່ວນໜຶ່ງຂອງພະນັກງານທີ່ເຮັດວຽກງານຍຸຕິທຳນັ້ນ ກໍຄືນັກກົດໝາຍ ຖ້າອາໄສແຕ່ພຽງກົດໝາຍຢ່າງດຽວ, ເຖິງວ່າຈະກຳນົດໃຫ້ດີເລີດປານໃດກໍຕາມ, ຖ້າຜູ້ນຳໃຊ້ກົດໝາຍນັ້ນຫາກບໍ່ມີຈັນຍາບັນແລ້ວສັງຄົມກໍ່ຈະສັບສົນ, ປັ່ນປ່ວນ ແລະ ຫາຄວາມສະຫງົບສຸກໄດ້ຍາກ ຫຼື ເຖິງແມ່ນວ່າຈະມີກົດໝາຍທີ່ມີຄວາມຍຸຕິທຳປານໃດກໍ່ຕາມ, ແຕ່ຖ້າກົດໝາຍນັ້ນຫາກຖືກລະເລີຍ ຫຼື ຖືກນຳໃຊ້ໄປໃນທາງທີ່ຜິດ, ກົດໝາຍນັ້ນກໍບໍ່ມີຜົນສັກສິດ. ສະນັ້ນ, ຈັນຍາບັນຈຶ່ງເປັນເລື່ອງທີ່ສຳຄັນຢູ່ໃນສັງຄົມ ໂດຍສະເພາະຢ່າງຍິ່ງ ແມ່ນຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ.

ການຝຶກຝົນຫຼໍ່ຫຼອມເປັນປົກກະຕິ ເພື່ອຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ເພີ່ມທະວີຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ແມ່ນການຕໍ່ສູ້ລະຫວ່າງແນວຄິດທີ່ກ້າວ ໜ້າກັບແນວຄິດຫຼ້າຫຼັງ ຢູ່ໃນກະໂຕລະຫວ່າງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານນັ້ນເອງ, ການຝຶກຝົນຫຼໍ່ຫຼອມຄຸນສົມບັດ ແລະ ຈັນຍາບັນຕ້ອງຕິດພັນກັບໜ້າທີ່ການເມືອງ, ເປັນອັນແນ່ນອນແລ້ວວ່າ ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານທີ່ມີໜ້າທີ່ການເມືອງແຕກຕ່າງກັນ ການຝຶກຝົນຄຸນສົມບັດສິນທຳປະຕິວັດກໍຕ່າງກັນ. ສະນັ້ນ, ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ກໍຄືຈັນຍາບັນ ກ່ອນອື່ນໝົດຕ້ອງຝຶກຝົນໃຫ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ສັດຊື່ບໍລິສຸດ ແລະ ມີຄວາມຈິງຮັກພັກດີຕໍ່ປະເທດຊາດ, ຕໍ່ພາລະກິດປ່ຽນແປງໃໝ່, ຝຶກຝົນຕົນເອງໃຫ້ມີຫຼັກໝັ້ນຊົນຊັ້ນ, ຮູ້ຈຳແນກມິດ-ສັດຕູຢ່າງຈະແຈ້ງ, ມີຄວາມເດັດດ່ຽວຜ່ານຜ່າຄວາມຫຍຸ້ງຍາກ, ເວລາໃດກໍ່ຍົກສູງຜົນປະໂຫຍດລວມຂອງຊາດ,

ຂອງລວມໝູ່ ແລະ ຂອງປະຊາຊົນເໜືອກວ່າຜົນປະໂຫຍດສ່ວນຕົວຢູ່ສະເໝີ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຕ້ອງມີຄວາມສັດຊື່ສຸດຈະລິດ, ປະພຶດດີ, ຮັບປະກັນຄວາມຍຸຕິທຳ, ຄວາມທ່ຽງທຳ, ບໍ່ລຳອຽງ, ເດັດຂາດບໍ່ໃຫ້ສິນບົນຕໍ່ພະນັກງານປະຕິບັດຄຳຕັດສິນຂອງສານ.

ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ: ຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ໝາຍເຖິງລະບຽບການທີ່ອີງການປະຕິບັດຄຳຕັດສິນຂອງສານ ກຳນົດຂຶ້ນກ່ຽວກັບການປະຕິບັດຂອງຜູ່ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ວຽກງານປະຕິບັດຄຳຕັດສິນຂອງສານດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ, ວອງໄວ ແລະ ທັນກັບກຳນົດເວລາໃນການປະຕິບັດຄຳຕັດສິນຂອງສານ. ຊຶ່ງຜູ້ເຂົ້າຮ່ວໃນປະຕິບັດຄຳຕັດສິນຂອງສານບໍ່ວ່າຈະເປັນບຸກຄົນ ຫຼື ການຈັດຕັ້ງຄວນຈະຕ້ອງຫຼີກລ້ຽງຈາກຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍກໍຖືວ່າມີຈັນບັນ, ເປັນຕົ້ນແມ່ນ:

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ກະທຳ ດັ່ງນີ້[2]:

1) ຍຸຍົງຄູ່ຄວາມ ບໍ່ໃຫ້ປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ:

ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານຕ້ອງມີຈັນຍາບັນໂດຍບໍ່ຍຸຍົງຄູ່ຄວາມ ຊຶ່ງຈະພາໃຫ້ຄູ່ຄວາມບໍ່ຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພຶດຕິກຳຍຸຍົງໄປໃນທາງທີ່ຜິດແມ່ນການສະແດງໃຫ້ເຫັນການຂາດຈັນຍາບັນຂອງ ບຸກຄົນທີ່ມີຕໍ່ບຸກຄົນອື່ນ ແລະ ການຈັດຕັ້ງ.

2) ຂັດຂວາງ ໃນການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ:

ພຶດຕິກຳການຂັດຂວາງການປະຕິບັດຕິບັດຄຳຕັດສິນຂອງສານ ແມ່ນພຶດຕິກຳຂອງບຸກຄົນທີ່ຂາດຈັນຍາບັນໃນການຮ່ວມມືປະຕິບັດຄຳຕັດສິນຂອງສານ, ການຂັດຂວາງດັ່ງກ່າວນັ້ນຈະນຳມາຊຶ່ງອຸປະສັກໃຫ້ແກ່ອົງການປະຕິບັດຄຳຕັດສິນຂອງສານໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ທັງຈະສ້າງຜົນເສຍຫາຍໃຫ້ແກ່ຄູ່ຄວາມໃນຄຳຕັດສິນຂອງສານ, ພຶດຕິກຳຂັດຂວາງດັ່ງກ່າວນີ້ອາດເວົ້າໄດ້ວ່າແມ່ນພຶດຕິກຳຂອງບຸກຄົນເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານຂາດຈັນຍາບັນໃນການສະໜັບສະໜູນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

3) ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນແກ່ພະນັກງານປະຕິບັດຄຳຕັດສິນຂອງສານ:

ການເປັນສື່ກາງໃນການໃຫ້ ແລະ ຮັບສິນບົນແກ່ພະນັກງານປະຕິບັດຄຳຕັດສິນຂອງສານ ກໍແມ່ນພຶດຕິກຳຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານທີ່ຂາດຈັນຍາບັນ, ເປັນບຸກຄົນທີ່ຂາດການຕຶກຕອງ ແລະ ບໍ່ມີຄວາມທ່ຽງທຳ.

4) ຮັບໂອນຊັບສິນ ທີ່ຕົນຮູ້ ຫຼື ຄວນຮູ້ວ່າຊັບສິນດັ່ງກ່າວຈະນຳໃຊ້ເຂົ້າໃນການປະຕິບັດຄຳຕັດສິນຂອງສານ:

ພຶດຕິກຳນີ້ແມ່ນພຶດຕິກຳທີ່ເຈດຕະນາຂອງຜູ້ທີ່ຂາດຈັນຍາບັນ ທັງທີ່ຮູ້ວ່າມັນຜິດກົກະທຳ, ຖ້າແມ່ນຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ກໍຖືວ່າເປັນຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານທີ່ບໍ່ມີຈັນຍາບັນ.

### 3. ຄວາມສຳຄັນຂອງຈັນບັນຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ

ຫຼາຍຄົນຮູ້ວ່າສິ່ງທີ່ຕົນໄດ້ເຮັດ, ຈະເຮັດ, ຄິດວ່າຈະເຮັດ ຫຼື ກະທຳລົງໄປນັ້ນເປັນສິ່ງທີ່ດີ ຫຼື ບໍ່, ແຕ່ບາງຄັ້ງກໍໄດ້ກະທຳໄປດ້ວຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ. ທັງໝົດເຫຼົ່ານີ້ໄດ້ສ່ອງແສງໃຫ້ເຫັນເຖິງຄຸນຄ່າຂອງການປະພຶດຕໍ່ສັງຄົມ ເນື່ອງຈາກການປະພຶດຂອງຄົນເຮົາໃນເວລາທີ່ຕົນມີສະຕິສຳປະຊັນຍະດີຢູ່ນັ້ນ ຍ່ອມຈະສາມາດບັນຊາການກະທຳຂອງຕົນເອງໄດ້. ໂດຍທົ່ວໄປແລ້ວຄົນເຮົາຈະຮູ້ວ່າສິ່ງໃດຜິດກົດໝາຍ ແລະ ສິ່ງໃດທີ່ຄວນກະທຳ. ຫຼັກແຫ່ງ

[2] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບປັບປຸງປີ 2008, ມາດຕາ 52.

ຄວາມປະພຶດທີ່ດີ ຫຼື ກອບບັງຄັບໃຫ້ປະຕິບັດໃນສິ່ງທີ່ດີ ແລະ ບໍ່ລະເມີດກົດໝາຍນັ້ນ ກໍໝາຍເຖິງຈັນຍາບັນນັ້ນເອງ ຕ່າງແຕ່ວ່າກົດໝາຍຈະວາງຂໍ້ກຳນົດທີ່ມີຜົນບັງຄັບໃຊ້ໂດຍລວມທົ່ວສັງຄົມ, ແຕ່ຈັນຍາບັນຈະສະເພາະເຈາະຈົງເຖິງກຸ່ມຄົນ ແລະ ສາຂາອາຊີບທີ່ກ່ຽວຂ້ອງເວົ້າລວມ, ເວົ້າສະເພາະກໍຄືຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ.

ຈັນຍາບັນກ່ຽວຂ້ອງໂດຍກົງກັບຫຼັກການປະພຶດຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ຊຶ່ງສ່ອງແສງໃຫ້ເຫັນຄຸນສົມບັດ ແລະ ກິລິຍາມາລະຍາດຂອງຄົນທີ່ສະແດງອອກພາຍນອກຕໍ່ອົງການປະຕິບັດຄຳຕັດສິນຂອງສານ, ຍ່ອມຈະສົ່ງຜົນກະທົບໂດຍກົງຕໍ່ຕົນເອງ ແລະ ສິດຜົນປະໂຫຍດອັນຊອບທຳຂອງສັງຄົມເວົ້າລວມ, ເວົ້າສະເພາະກໍຄືສິດຜົນປະໂຫຍດອັນຊອບທຳຂອງຄູ່ຄວາມໃນການປະຕິບັດຄຳຕັດສິນຂອງສານ, ສະແດງໃຫ້ເຫັນວ່າບຸກຄົນນັ້ນມີຈັນຍາບັນຂອງຄວາມເປັນຄົນຜູ້ໜຶ່ງຫຼາຍໜ້ອຍພຽງໃດ.

ຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນຕໍ່ອົງການປະຕິບັດຄຳຕັດສິນຂອງສານ ແລະ ຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ເນື່ອງຈາກຈະເຮັດໃຫ້ວຽກງານປະຕິບັດຄຳຕັດສິນຂອງສານຖືກປະຕິບັດໄດ້ຢ່າງມີປະສິດທິຜົນ ທັງຍັງເປັນບ່ອນອີງໃຫ້ແກ່ຜູ້ເຂົ້າຮ່ວມໄດ້ຍຶດຖື ແລະ ປະຕິບັດຢ່າງຖືກຕ້ອງຕາມຂັ້ນຕອນ, ໃນກໍລະນີຜູ້ເຂົ້າຮ່ວມຫາກປະຕິບັດຕາມຫຼັກຈັນຍາບັນດັ່ງກ່າວແລ້ວກໍຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສາມາດປະຕິບັດໄດ້ຢ່າງສະດວກ, ວ່ອງໄວ, ປະຕິບັດໄດ້ໂດຍສອດຄ່ອງກັບກົດໝາຍ ແລະ ຄູ່ຄວາມກໍໄດ້ຮັບຄວາມເປັນທຳ.

ຖ້າຜູ້ເຂົ້າຮວ່ມປະຕິບັດຄຳຕັດສິນຂອງສານມີຈັນຍາບັນກໍຈະເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄດ້ຮັບຜົນດີເພາະໄດ້ຮັບການຮ່ວມມືຢ່າງຈິງໃຈຈາກຜູ້ເຂົ້າຮ່ວມ ເຊັ່ນ: ຊ່ຽວຊານຈິງໃຈພິສູດ, ພະຍານຈິງໃຈໃຫ້ຂໍ້ມູນ ທັງໝົດນັ້ນລ້ວນແຕ່ສະແດງເຖິງການມີຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ.

ກົງກັນຂ້າມຖ້າຜູ້ເຂົ້າຮວ່ມປະຕິບັດຄຳຕັດສິນຂອງສານຂາດຈັນຍາບັນກໍຈະເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານບໍ່ມີປະສິດທິພາບ ຫຼື ອາດຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານຂັດຂ້ອງຍ້ອນຜູ້ເຂົ້າຮ່ວມບໍ່ໃຫ້ການຮ່ວມມື ຫຼື ຂາດການຈັນຍາບັນ, ເຊັ່ນ: ຊ່ຽວຊານບໍ່ຈິງໃຈພິສູດ, ພະຍານໃຫ້ການບໍ່ຖືກກັບຄວາມຈິງ,...ສິ່ງດັ່ງກ່າວສະແດງໃຫ້ເຫັນວ່າຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານຂາດຈັນຍາບັນ ສົ່ງຜົນສະທ້ອນໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານບໍ່ມີປະສິດທິພາບ.

ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ ຈັນຍາບັນຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນທີ່ສຸດເພື່ອໃຫ້ວຽກງານປະຕິບັດຄຳຕັດສິນຂອງສານດຳເນີນໄປຢ່າງຄ່ອງຕົວ ແລະ ມີປະສິດທິຜົນ, ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງກັບຕົວຈິງ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສັງຄົມເວົ້າລວມ ແລະ ເວົ້າສະເພາະກໍຄືສິດຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ.

**References:**


1. ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008;
2. ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 447/ກຍ, ລົງວັນທີ 05 ເມສາ 2019 ວ່າດ້ວຍການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
3. ທ່ານ ບຸນຕາ ສ.ຜາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011.